<u>ຄູ່ມືແນະນຳ ແລະ ການນຳໃຊ້</u>

# ແນວພັນເຂົ້າ ໜອງລືມ 1 (Nonglom1)




ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
ອົງການອອກຟາມ
ພະແນກກະສິກຳ ແລະ ປ່າໄມ້ ແຂວງອັດຕະປື

## ປະຫວັດຂອງແນວພັນ

ແນວພັນຫນອງລິມ 1 (NL1) ຫຼື TDK10394-B-B-54-(42)-SKX-B-B-NL-B-B ແມ່ນປະສົມພັນຈາກສູນຄົ້ນຄວ້າເຂົ້າ ນາພອກ ລະດູແລ້ງ 2007-2008 ໂດຍປະສົມລະຫວ່າງ ແນວພັນ **B6144F-MR-6-0-0** ກັບ ແນວພັນ **TDK 7.** ໃຊ້ຮູບແບບປະສົມພັນແບບດ່ຽວ ໃນລະດູແລ້ງ 2007-2008, ປູກຄັດເລືອກທີ່ສູນແບບສືບປະຫວັດ ຮອດ ຊົ່ວທີ 4 ແລ້ວສົ່ງໄປໃຫ້ໂຮງຮຽນຊາວນາບ້ານ ສາມັກຄີ ເມືອງສາມັກຄີໄຊ ແຂວງອັດຕະປືຄັດເລືອກຕໍ່ ໃນຊົ່ວທີ 5 ແລະ 6 ໃນລະດູ 2015-2016 ແມ່ນ ທ່ານ ບຸນຖຸ້ນ ປູກຄັດເລືອກ ເຫັນວ່າສາຍພັນເລີ້ມຄົງຕົວ ປັບຕົວໄດ້ດີໃນສະພາບແວດລ້ອມເຂດນີ້, ແລ້ວເງື່ອນໄຂນໍ້າບໍ່ສະດວກ ຈຶ່ງໄດ້ເອົາມາສືບຕໍ່ຄັດເລືອກຢູ່ ສູນຄົ້ນຄວ້າກະສິກໍາ ຫນອງລິມໃນປີ 2017-2020, ໃນລະດູຝົນ 2020 ໄດ້ທົດສອບການກິນ ເຫັນວ່າແຊບ ອ່ອນນຸ້ມ ພ້ອມກັບໃຫ້ຜົນຜະລິດດີ. ໃນປີ 2021 ໄດ້ປູກຂະຫຍາຍເມັດ ແລະ ເອົາໄປປູກປຽບທຽບຜົນຜະລິດ ຢູ່ 18 ບ້ານ ໃນ 6 ແຂວງ (ອຸດົມໄຊ, ຫລວງພະບາງ, ໄຊຍະບູລີ, ວຽງຈັນ, ສາລະວັນ ແລະ ອັດຕະປື) ເຫັນວ່າຜົນຜະລິດ ຕັ້ງແຕ່ 3,5 ຫາ 5,7 ໂຕນ/ເຮັກຕາ ສະເລັຍ 18 ບ້ານຜົນຜະລິດ 4,95 ໂຕນ/ເຮັກຕາ.

## ລັກສະນະເດັ່ນຂອງແນວພັນ ໜອງລີມ1



1. ເໝາະກັບດິນ ຊາຍແກມຕົມ ຫຼືດິນຕົມ
2. ທົນພະຍາດໃຫມ້ ,ປັບຕົວກັບສະພາບແວດລ້ອມໄດ້ດີ,
3. ທົນບົ່ວໄດ້ດີ
4.ຜົນລິດດີ 4- 5 ໂຕນ/ເຮັກຕາ
5.ກິນອ່ອນ,ມີກິ່ນໜ້ອຍໜຶ່ງ

## ຕາຕະລາງປຽບທຽບລັກຊະນະ ໜອງລີມ1 ກັບພໍ່ແມ່ພັນ

| ແນວພັນເຂົ້າ | ໜອງລີມ1 | B6144F-MR-6-0-0 | TDK 7 |
|---|---|---|---|
| ປະເພດເຂົ້າ | ເຂົ້າໜຽວ | ເຂົ້າຈ້າວ | ເຂົ້າໜຽວ |
| ສີເມັດ | ສີນ້ຳຕານ | ສີເຫຼືອງເຂັ້ມ | ສີເຫຼືອງ |
| ອາຍຸ (ວັນ) | 130-135 | 120-125 | 125-130 |
| ລະດູປູກ | **2 ລະດູ** | 2 ລະດູ | 2 ລະດູ |
| ລວງສູງ (ຊມ) | 160-170 | 90-100 | 90-100 |
| ເປີເຊັນການສີ (%) | 50-55 | 50-55 | 60 |
| ຜົນຜະລິດ (ໂຕນ/ເຮັກຕາ) | 4-5 | 5-6 | 5 |
| ຈຸດເດັ່ນຂອງແນວພັນ | ທົນພະຍາດໃຫມ້ | ທົນພະຍາດໃຫມ້, ປູກໄຮ່ກໍ່ໄດ້ | ອອນແອ່ຕໍ່ພະຍາດໃຫມ້ |







## ແນະນຳການປູກ

ແນວພັນ ໜອງລຶມ1 ສາມາດປູກໄດ້ 2 ລະດູຄື: ນາແຊງ ແລະ ນາປີ.

ວິທີການປູກ:

- ນາດຳແມ່ນແນະນຳ ຕົກກ້າ ຊ້ວງ ເດືອນ.6, ຫຼັງຈາກຕົກກ້າໄດ້ 20-25 ວັນ ສາມາດນຳໄປປັກດຳໄດ້
- ນາຫວານ ຫລື ນາຢອດແຫ້ງ ບໍ່ແນະນຳໃຫ້ປູກເນື່ອງຈາກຕົ້ນສູງ ອາດຈະພາໃຫ້ລົ້ມ

**ການໃສ່ຝຸ່ນ** ນາດິນຊາຍ ໃຫ້ໃສ່ຝຸ່ນປະສົມສູດ 15-15-15 ໃນອັດຕາ200 ກລ/ຮຕ, ນາດິນໜຽວໃສ່ຝຸນປະສົມສູດ 16-20-00 ໃນອັດຕາ 200 ກລ/ຮຕ, ຫຼັງຈາກປັກດຳໄດ້ 5-7 ມື້ ແລະ ໃຫ້ໃສ່ຝຸ່ນເລັ່ງ 2 ຄັ້ງ: ສູດ 46 0 0 ຫຼັງຈາກປັກດຳໄດ້ 25 ມື້ ແລະ 45 ມື້ ໃນອັດຕາ 30 ກລ/ຮຕ/ຄັ້ງ.



## ການເກັບກ່ຽວ

ເໝາະສົມໃນການນຳໃຊ້ກົນຈັກເກັບກ່ຽວເຊິ່ງສາມາດເກັບກ່ຽວໄດ້ພາຍໃນ 30 ວັນ ນັບແຕ່ວັນອອກດອກໄດ້ 50%, ຫ້າມກ່ຽວຊ້າເພາະຈະເຮັດໃຫ້ເຂົ້າຫັກໃນເວລາສີເຮັດໃຫ້ ເປີເຊັນເຂົ້າສານປະເພດ 1 ຕ່ຳ, ຖ້າໃຊ້ແຮງງານຄົນເກັບກ່ຽວຄວນຕາກຝ່ອນເຂົ້າໃນທົ່ງນາປະມານ 2 ແດດ ຈຶ່ງເກັບກູ້ ແລະ ຟາດຕີ


**ຕິດຕໍ່ປະສານແນວພັນ**

**ທ່ານ ບຸນຖັນ ຕັນດາວົງ**

**ໂທ: 020 99865495**